# ເຕັກນິກການປູກຫວາຍໂຕ່ນ

## 1.ການປູກຫວາຍໂຕ່ນ



**ຄຸນປະໂຫຍດ**

ການປູກຫວາຍໂຕ່ນເພື່ອ:

ການນໍາໃຊ້ເສັ້ນຫວາຍເຂົ້າໃນການຈັກສານ.

ເພື່ອນໍາໃຊ້ຍອດ ບໍລິໂພກ, ຂາຍຍ່ອຍ ຫຼື ປຸງແຕ່ງເປັນຫວາຍແຫ້ງ ແລະ ສົ່ງຂາຍ.

## 2. .ສະພາບສວນປູກຫວາຍ



ສວນປູກຫວາຍສາມາດຈັດຕັ້ງປະຕິບັດໄດ້ເອງໃນລະດັບ ຄອບຄົວ ຫຼືເປັນພື້ນທີ່ກວ້າງໆໃນທາງທຸລະກິດ ໂດຍບໍ່ຕ້ອງໃຊ້ແຮງງານຫຼາຍ, ເປັນການລົງທຶນໜ້ອຍ ສາມາດເກັບກູ້ຜົນຜະລິດໄດ້ຫຼາຍເພາະວ່າຫວາຍຊະນິດນີ້ມີຂະໜາດໃຫ່ຍ,ລາຄາແພງ ກ່ວາຫວາຍແຍ້, ສາມາດປູກດ່ຽວ ຫຼືປູກປະສົມກັບພືດຊະນິດອື່ນ ໃນເນື້ອທີ່ 1 ໄລ່ສາມາດປູກຫວາຍໄດ້ 260 ເບ້ຍໄລຍະຫ່າງທີ່ເໝາະສົມ 2x3ແມັດ, ຫວາຍຊະນິດນີ້ສາມາດປູກໄວ້ບໍລິໂພກ ຫຼື ເພື່ອຂາຍເສັ້ນໄດ້ ໃນ24ເດືອນສາມາດຕັດຍອດໄດ້

## 3.ເຕັກນິກການກ້າແກ່ນຫວາຍ

ນໍາເອົາແກ່ນຫວາຍທີ່ແກ່ເຕັມທີ່ແລ້ວມາແຊ່ນໍ້າປະໄວ້ 10-15ມື້ແລ້ວຂັດເປືອກທີ່ມີສີຂາວຕິດຢູ່ແກ່ນຫວາຍອອກຈົນໝົດ ແລ້ວນໍາມາໂຮຍໃສ່ໜານກ້າທີ່ກຽມໄວ້ແລ້ວ.ໜານກ້າທີ່ເໝາະສົມຄວນມີດິນລ້ອນ-ດິນຊາຍ-ແກບເຜົາ-ຝຸ່ນຄອກປະສົມໃນອັດຕາສ່ວນ1-1-1-1,ໜານກ້າແກ່ນຫວາຍຄວນເຮັດຢູ່ບ່ອນຮົ່ມພໍສົມຄວນມີແສງແດດປະມານ70-80 %ຫຼັງຈາກນັ້ນໂຮຍແກ່ນຫວາຍທີ່ກຽມໄວ້ລົງໃນໜານກ້າ ໂຮຍດິນປົກໜາປະມານ 1 ຊມ, ຫຼັງຈາກນັ້ນຫົດນໍ້າໃຫ້ຊຸ່ມ

ແລ້ວເອົາຜ້າຢາງໃສປົກຄຸມ ຫຼື ໃຊ້ເຟືອງແທນກໍ່ໄດ້ ເພື່ອກັນການລະເຫີຍຂອງນໍ້າ, ເມື່ອເບ້ຍຫວາຍສູງປະມານ 1-2 ຊມ ໃຫ້ຍ້າຍໃສ່ເບົ້າທີ່ຕຽມໄວ້ ຊຶ່ງສ່ວນປະສົມໃນເບົ້າມີ ດິນລ້ອນ 1 ສ່ວນ,ຝຸ່ນຄອກ 1 ສ່ວນ ແລະ ແກບເຜົາ ½ ສ່ວນ, ຈາກນັ້ນນຳເອົາເບ້ຍຫວາຍ
ໄປໄວ້ໃນເຮືອນກ້າເບັ້ຍຫວາຍ









## 4. ປັດໃຈທີ່ຄວນເລືອກ

- ເນື້ອທີ່ຈະຕ້ອງເປັນທີ່ແຈ້ງສຳລັບປູກຫວາຍເອົາຍອດ.
- ເນື້ອທີ່ຕ້ອງຢູ່ກ້ອງຕົ້ນໄມ້ສຳລັບປູກຫວາຍເອົາເສັ້ນ.
- ລັກສະນະຂອງດິນທີ່ປູກຕ້ອງມີຄວາມອຸດົມ ສົມບູນ.
- ນໍ້າບໍ່ຖ້ວມຢູ່ທີ່ສູງຍິ່ງເປັນການດີ.

## 5. ເຕັກນິກການປູກ

<u>ລະດູການປູກ:</u>

- ອາຍຸຂອງເບ້ຍຫວາຍຄວນຢູ່ໃນລະຫວ່າງ 9-12 ເດືອນ. ລະດູການທີ່ເໝາະສົມແມ່ນຊ່ວງເດືອນ 5(ພຶດສະພາ)

ການຂຸດຂຸມ ແລະ ການປູກ:

- ຂຸດຂຸມຂະໜາດ 30x30X30ຊມ (ກວ້າງ, ຍາວ ເລິກ)ໃສ່ຝຸ່ນຄອກຮອງພື້ນຂຸມ 0,5 ກລ/ຕາແມັດ

ໄລຍະຫ່າງການປູກ:

- ໄລຍະຫ່າງການປູກ 2 x 3 ແມັດ ຫຼັງຈາກປູກ ແລ້ວຢຽບດິນໃຫ້ແໜ້ນແລ້ວຫົດນ້ຳ 1-2 ຄັ້ງ ຕໍ່ອາທິດ(ຖ້າຝົນບໍ່ຕົກ)



ການບົວລະບັດຮັກສາ:

ຫຼັງຈາກປູກໄດ້3ເດືອນໃຫ້ເອົາຝຸ່ນຄອກໃສ່ໃນອັດຕາ ສ່ວນ 1 ກລ/ຕົ້ນ ຫຼືຝຸ່ນວິທະຍາສາດໃສ່ໃນອັດຕາ 200 ກຣາມ/ຕົ້ນ(ສູດ 15:15:15)ພ້ອມທັງເສຍຫຍ້າ, ທວາຍຊະນິດນີ້ ຫຼັງຈາກປູກໄດ້ 2ປີຈິ່ງສາມາດຕັດ ຍອດໄດ້.



## 6. ວິທີການຕັດຍອດ

***ກ່ອນຕັດຄວນສັງເກດເຫັນວ່າມີ 2-4 ຍອດ***

- ຄວນເລືອກຕັດລຳເດີມທີ່ນຳມາປູກເສຍກ່ອນ ຍ້ອນວ່າມັນຈະເປັນລຳອາຍຸແກ່ກ່ອນໝູ່ຖ້າ ເຫັນວ່າລຳຕົ້ນເດີມນັ້ນເກີດໜໍ່ແລ້ວ.
- ເລືອກຕັດລຳທີ່ມີໃບຍ່ອຍກຳລັງຈູມຍາວປະມານ 20ຊມ.
- ຄວນເລືອກຕັດຍອດທີ່ໃກ້ຄຽງກັບໜໍ່ໃໝ່ທີ່ກຳລັງເກີດຂຶ້ນແລະສູງຈາກໜ້າດິນປະມານ 5ຊມ
- ຕັດຍອດໃນລະດູຝົນຈະໄດ້ໜໍ່ໃຫຍ່ ແລະ ໄດ້ປະລິມານຍອດອ່ອນຫຼາຍ.





# 7. ຜົນໄດ້ຮັບຈາກການປູກຫວາຍ

## 7.1 ຜົນໄດ້ຮັບຈາກການຂາຍຍອດຫວາຍ



ສວນປູກຫວາຍທີ່ຖືກຕ້ອງຕາມເຕັກນິກຈະສາມາດເລີ່ມຕັດຍອດໄດ້ຫຼັງການປູກ 2 ປີ ແລະຈະສາມາດຕັດຍອດໄດ້ 20-40ປີຈາກການລົງທຶນພຽງຄັ້ງດຽວຈະສາມາດເກັບກູ້ໄດ້ຍາວນານ, ຫວາຍໂຕ່ນຈະບໍ່ທົນຕໍ່ນ້ຳຖ້ວມ ຖ້ານ້ຳຖ້ວມຫວາຍນ້ອຍຈະຕາຍ.

## 7.2 ຜົນໄດ້ຮັບຈາກການເບັ້ຍຫວາຍ



ການປູກຫວາຍເພື່ອຕັດເສັ້ນຈະມີຄວາມແຕກຕ່າງກັນທາງ ດ້ານສະຖານທີ່ ຫຼືປູກໃສ່ກ້ອງປ່າ, ຖ້າເຮົາປະໄວ້ຮອດ 5 ປີຂຶ້ນໄປ ແລະ ໃສ່ຝຸ່ນ 1 ຄັ້ງ ເຮົາຈະເລືອກຕັດເສັ້ນຫວາຍໄດ້ສຸມໜຶ່ງປະມານ 3-5 ເສັ້ນ ແລະ ຄວາມຍາວສະເລ່ຍ 10-15 ແມັດ.





ບໍລິສັດ ໄຟຟ້ານ້ຳເທີນ 2 ຈຳກັດ
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ, ໜ່ວຍງານຟື້ນຟູຊີວິດການເປັນຢູ່ ມິນາ 2013